# ພຣະທັມເຊຟັນຢາ


| 1 | 2 | 3 |
|---|---|---|


## ເຊຟັນຢາ

## ZEPHANIAH

## 1

Chapter 1

1 ພຣະຄໍາຂອງພຣະຜູ້ເປັນເຈົ້າຊຶ່ງມາເຖິງເຊຟັນຢາ ບຸດກູຊີ ຜູ້ເປັນບຸດຂອງເກດາລີຢາ ຜູ້ເປັນບຸດຂອງອາມາຣີ
ຢາ ຜູ້ເປັນບຸດຂອງເຮເຊກີຢາ ໃນຣັຊການໂຢຊີຢາ ຣາຊໂອຣົດຂອງອາໂມນ ກະສັດຂອງຢູດາ

**ວັນແຫ່ງພຣະພິໂຣດຂອງພຣະເຈົ້າ**

2 ພຣະຜູ້ເປັນເຈົ້າສັ່ງວ່າ, “ເຮົາຈະກວາດທຸກສິ່ງທຸກຢ່າງໃຫ້ກ້ຽງຈາກພື້ນພິພົບ”
3 ພຣະຜູ້ເປັນເຈົ້າສັ່ງວ່າ, “ເຮົາຈະກວາດມະນຸດ ແລະສັດເດັຽຣະສານໄປເສັຽ ເຮົາຈະກວາດນົກໃນອາກາດໄປ
ເສັຽ ທັງປາໃນທະເລດ້ວຍ ເຮົາຈະກວາດລ້າງຄົນອະທັມ ເຮົາຈະກໍາຈັດມະນຸດຊາດເສັຽຈາກພື້ນພິພົບ
4 ເຮົາຈະຢຽດມືຂອງເຮົາອອກຕໍ່ສູ້ຢູດາ ແລະຕໍ່ຊາວເຢຣູຊາເລັມທັງມວນ ເຮົາຈະກໍາຈັດເສດເຫລືອຂອງພຣະບາ
ອານເສັຽຈາກສະຖານທີ່ນີ້ ແລະກໍາຈັດຊື່ບັນດາປະໂຣຫິດຜູ້ຮັບໃຊ້ພຣະບາອານເສັຽ
5 ກໍາຈັດຄົນເຫລົ່ານັ້ນທີ່ຂາບໄຫວ້ລົງເທິງດາດຟ້າຫລັງຄາຕຶກ ເພື່ອໄຫວ້ບໍຣິວານແຫ່ງຟ້າສວັນ ຄົນເຫລົ່ານັ້ນທີ່
ຂາບລົງສາບານຕໍ່ພຣະຜູ້ເປັນເຈົ້າ ເຖິງປານນັ້ນກໍຍັງສາບານໂດຍພຣະມິນໂກມ
6 ຄົນເຫລົ່ານັ້ນທີ່ຫັນກັບຈາກການຕິດຕາມພຣະຜູ້ເປັນເຈົ້າ ຜູ້ບໍ່ໄດ້ສແວງຫາພຣະຜູ້ເປັນເຈົ້າຫລືທູນຖາມພຣະ
ອົງ”
7 ຈົ່ງງຽບສງົບຢູ່ຕໍ່ເບື້ອງພຣະພັກພຣະຜູ້ເປັນເຈົ້າ ເພາະວ່າວັນແຫ່ງພຣະເຈົ້າມາໃກ້ແລ້ວ ພຣະຜູ້ເປັນເຈົ້າຊົງຕຽມ
ເຄື່ອງບູຊາ ແລະຊົງກະທໍາແຂກຂອງພຣະອົງໃຫ້ບໍຣິສຸດ
8 ແລະໃນວັນທີ່ພຣະຜູ້ເປັນເຈົ້າຊົງຂ້າບູຊານັ້ນ (ຄືພຣະອົງກ່າວວ່າ) “ເຮົາຈະລົງໂທດບັນດາເຈົ້ານາຍ ແລະໂອ
ຣົດຂອງກະສັດ ແລະບັນດາຜູ້ທີ່ຕົກແຕ່ງຕົວດ້ວຍເຄື່ອງແຕ່ງກາຍຕ່າງດ້າວ
9 ໃນວັນນັ້ນ ເຮົາຈະລົງໂທດທຸກຄົນທີ່ກະໂດດຂ້າມປະຕູ ແລະບັນດາຜູ້ທີ່ກະທໍາໃຫ້ເຮືອນຂອງນາຍເຕັມໄປ
ດ້ວຍຄວາມທາຣຸນ ແລະການຄົດໂກງ”
10 ພຣະຜູ້ເປັນເຈົ້າກ່າວວ່າ, “ໃນວັນນັ້ນ ຈະໄດ້ຍິນສຽງຮ້ອງຈາກປະຕູປາ ແລະສຽງຮ້ອງໄຫ້ໃນເຂດສ້າງໃຫມ່ໃນ
ຕົວເມືອງ ແລະສຽງອຶກກະທຶກຈາກເນີນພູ
11 ໂອ ຊາວເມືອງທີ່ຢູ່ເຂດລຸ່ມ ຈົ່ງຮ້ອງໄຫ້ເຖີດ ເພາະພໍ່ຄ້າທັງປວງກໍບໍ່ມີເຫລືອແລ້ວ ຜູ້ທີ່ຊັ່ງເງິນຄ້າຂາຍກໍຖືກກໍາ
ຈັດເສັຽແລ້ວ
12 ໃນເວລານັ້ນເຮົາຈະເອົາຕະກຽງສ່ອງເບິ່ງເຢຣູຊາເລັມ ແລະເຮົາຈະລົງໂທດຄົນທີ່ສ້າງຄວາມອີ່ມອົກອີ່ມໃຈ
ແລະເຊື່ອຫມັ້ນໃຈຕົນເອງ ຜູ້ທີ່ກ່າວໃນໃຈຂອງຕົນວ່າ, “ພຣະຜູ້ເປັນເຈົ້າຈະບໍ່ຊົງກະທໍາການດີ ແລະພຣະອົງກໍ
ຈະບໍ່ຊົງກະທໍາການຊົ່ວ”
13 ຊັບສິ່ງຂອງຂອງເຂົາຈະຖືກປຸ້ນ ແລະເຮືອນຂອງເຂົາຈະຖືກທໍາລາຍ ເຖິງເຂົາຈະສ້າງເຮືອນ ເຂົາກໍຈະບໍ່ໄດ້ຢູ່
ໃນເຮືອນນັ້ນ ເຖິງເຂົາຈະທໍາສວນອະງຸ່ນ ເຂົາຈະບໍ່ໄດ້ດື່ມເຫລົ້າອະງຸ່ນຈາກສວນນັ້ນ”

The Great Day of the Lord
(ອມສ 5:18-20)
14 ວັນສຳຄັນຂອງພຣະຜູ້ເປັນເຈົ້າໃກ້ເຂົ້າມາ ໃກ້ເຂົ້າມາ ແລະມາໄວທີ່ສຸດ ສຽງແຫ່ງວັນຂອງພຣະຜູ້ເປັນເຈົ້າກໍ
ຂົມຂື່ນ ທະຫານທີ່ເກັ່ງກ້າຈະຮ້ອງສຽງດັງທີ່ນັ້ນ
15 ວັນນັ້ນເປັນວັນແຫ່ງພຣະພິໂຣດ ເປັນວັນແຫ່ງຄວາມທຸກໃຈ ແລະເປັນວັນລະທົມ ເປັນວັນພິນາດ ແລະວັນທຳ
ລາຍ ເປັນວັນແຫ່ງຄວາມມືດ ແລະຄວາມມືດຄຶ້ມ ເປັນວັນທີ່ມີເມກແລະຄວາມມືດຕຶບ
16 ເປັນວັນທີ່ມີສຽງເຂົາສັດ ແລະວັນໂຫ່ຮ້ອງຕໍ່ເມືອງທັງຫລາຍທີ່ມີປ້ອມປ້ອງກັນ ແລະຫໍຄອຍສູງ
17 ເຮົາຈະນຳທຸກພັຍມາສູ່ມະນຸດ ເຂົາຈະໄດ້ເດີນໄປເຫມືອນຄົນຕາບອດ ເພາະເຂົາໄດ້ກະທຳບາບຕໍ່ພຣະຜູ້ເປັນ
ເຈົ້າ ເລືອດຂອງເຂົາຈະຖືກເທອອກເຫມືອນຝຸ່ນ ແລະເນື້ອຂອງເຂົາຈະຖືກເທອອກເຫມືອນຊາກສົບທີ່ເນົ່າ
ເປື່ອຍ
18 ເງິນຫລືທອງຄຳຂອງເຂົາກໍດີ ຈະບໍ່ສາມາດຊ່ອຍກູ້ເຂົາໄດ້ ໃນວັນແຫ່ງພຣະພິໂຣດຂອງພຣະຜູ້ເປັນເຈົ້າ ພິພົບ
ທັງສິ້ນຈະຖືກເຜົາຜານໃນໄຟແຫ່ງຄວາມຫວງແຫນຂອງພຣະອົງ ພຣະອົງຈະຊົງກະທຳໃຫ້ຊາວພື້ນພິພົບທັງ
ສິ້ນເຖິງທີ່ສິ້ນສຸດ ເຖິງທີ່
ສິ້ນສຸດຢ່າງກະທັນຫັນ

## 2 ຄວາມພິນາດຂອງປະຊາຊາດທີ່ຢູ່ອ້ອມຮອບ

Judgment on Israel's Enemies
1 ໂອ ປະຊາຊາດທີ່ໄຮ້ຄວາມອາຍເອີຍ, ຈົ່ງມາກັນ ມາຊຸມນຸມກັນ
2 ກ່ອນທີ່ເຈົ້າຈະຖືກຂັບໄລ່ໄປດັ່ງແກບທີ່ປິວ ກ່ອນທີ່ພຣະພິໂຣດອັນຮ້າຍແຮງແຫ່ງພຣະຜູ້ເປັນເຈົ້າຈະລົງມາ
ເຫນືອເຈົ້າ ກ່ອນທີ່ວັນແຫ່ງພຣະພິໂຣດຂອງພຣະຜູ້ເປັນເຈົ້າຈະລົງມາເຫນືອເຈົ້າ
3 ທຸກຄົນທີ່ໃຈຖ່ອມໃນແຜ່ນດິນນີ້ ຄືຜູ້ທີ່ກະທຳຕາມພຣະຄຳສັ່ງຂອງພຣະອົງ ຈົ່ງສແວງຫາພຣະຜູ້ເປັນເຈົ້າ ຈົ່ງ
ສແວງຫາຄວາມຊອບທັມ ສແວງຫາຄວາມຖ່ອມໃຈ ຊຶ່ງເຈົ້າຈະໄດ້ຮັບການກຳບັງໃນວັນແຫ່ງພຣະພິໂຣດຂອງ
ພຣະຜູ້ເປັນເຈົ້າ
4 ເພາະວ່າເມືອງກາຊາຈະຖືກປະຖິ້ມ ແລະເມືອງອັສເກໂລນຈະເປັນເມືອງຮ້າງ ຊາວເມືອງອັສໂດດຈະຖືກຂັບ
ໄລ່ໃນເວລາທ່ຽງວັນ ແລະເມືອງເອກໂຣນຈະຖືກຖອນຮາກ
5 ວິບັດແກ່ເຈົ້າ ຊາວເມືອງຊາຍທະເລ ເຈົ້າຜູ້ເປັນປະຊາຊາດເຄເຣ ພຣະຄຳຂອງພຣະຜູ້ເປັນເຈົ້າມີມາກ່າວໂທດ
ເຈົ້າ ໂອ ການາອານ ແຜ່ນດິນຂອງຄົນຟີລິສຕິນ ເຮົາຈະທຳລາຍເຈົ້າຈົນບໍ່ມີຊາວເມືອງເຫລືອ
6 ໂອ ຊາຍທະເລເອີຍ, ເຈົ້າຈະເປັນລານຫຍ້າ ເປັນທົ່ງຫຍ້າສຳລັບຜູ້ລ້ຽງແກະ ແລະເປັນຄອກສຳລັບຝູງແບ້
ແກະ
7 ຊາຍທະເລນັ້ນ ຈະເປັນກຳມະສິດຂອງເຊື້ອສາຍຢູດາທີ່ເຫລືອຢູ່ນັ້ນ ເຂົາຈະຫາກິນທີ່ນັ້ນພໍເຖິງເວລາຄ່ຳເຂົາ
ຈະນອນລົງທີ່ໃນເຮືອນທັງຫລາຍຂອງອັສເກໂລນ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາຈະເອົາພຣະທັຍ
ໃສ່ເຂົາ ແລະໃຫ້ເຂົາກັບສູ່ສະພາບເດີມ
8 "ເຮົາໄດ້ຍິນຄຳດ່າຂອງໂມອາບ ແລະຄຳຫມິ່ນປມາດຂອງຄົນອັມໂມນແລ້ວ ຊຶ່ງເຂົາດ່າປະຊາຊົນຂອງເຮົາ
ແລະອວດອ້າງເຣື່ອງເຂດແດນຂອງເຂົາທັງຫລາຍ
9 ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າຂອງອິສຣາເອນສັ່ງວ່າ, "ເຫດນີ້ເຮົາມີຊີວິດຢູ່ແນ່ແທ້ສັນໃດ ໂມອາບຈະ
ກາຍເປັນເຫມືອນເມືອງໂຊໂດມ ແລະຄົນອັມໂມນຈະເຫມືອນເມືອງໂກໂມຣາ ຄືເປັນແຜ່ນດິນທີ່ມີຕົ້ນຫນາມ

ແລະບໍ່ເກືອ ແລະເປັນທີ່ຮ້າງເປົ່າເປັນນິດ ຊົນຊາດຂອງເຮົາທີ່ເຫລືອຢູ່ຈະປຸ້ນເຂົາ ແລະຄົນໃນປະຊາຊົນຂອງ
ເຮົາທີ່ລອດຕາຍຢູ່ຈະຍຶດເຂົາເປັນກຳມະສິດ”
10 ນີ້ຈະເປັນຜົນຕອບແທນຄວາມຈອງຫອງຂອງເຂົາ ເພາະເຂົາດ່າ ແລະໂອ້ອວດຕໍ່ປະຊາຊົນຂອງພຣະຜູ້ເປັນ
ເຈົ້າຈອມໂຍທາ
11 ພຣະຜູ້ເປັນເຈົ້າຊົງເປັນທີ່ເກງກົວຂອງເຂົາທັງຫລາຍ ພຣະອົງຈະຊົງກະທຳໃຫ້ພຣະທັງຫລາຍຂອງໂລກຜ່າຍ
ຜອມ ແລະແຜ່ນດິນແຫ່ງປະຊາຊາດທັງສິ້ນຈະກົ້ມລົງນະມັສການພຣະອົງຕາມທ້ອງຖິ່ນຂອງຕົນ
12 ໂອ ຄົນເອທິໂອເປັຽເອີຍ, ເຈົ້າກໍເຫມືອນກັນ ຈະຕ້ອງຖືກປະຫານເສັຽດ້ວຍດາບຂອງເຮົາ
13 ແລ້ວພຣະອົງຈະຍື່ນພຣະຫັດຂອງພຣະອົງຕໍ່ເມືອງທາງທິດເຫນືອ ແລະທຳລາຍອັສຊີເຣັຽ ແລະຈະກະທຳໃຫ້
ເມືອງນີເນເວເປັນເມືອງຮ້າງ ເປັນທີ່ແຫ້ງແລ້ງເຫມືອນຖິ່ນກັນດານ
14 ບັນດາຝູງສັດຈະນອນຢູ່ໃນທີ່ນັ້ນ ສັດປ່າທັງສິ້ນ ນົກກະທຸງ ແລະກາ ຈະອາສັຍຢູ່ທີ່ຫົວເສົາທັງຫລາຍຂອງເມືອງ
ນັ້ນ ນົກເຄົ້າແມວຈະມາຮ້ອງຢູ່ທີ່ປ່ອງຢ້ຽມ ນົກກາຈະສົ່ງສຽງຢູ່ທີ່ຂັ້ນໄດປະຕູ ເພາະຝາເຮືອນທີ່ທຳດ້ວຍໄມ້ສົນ
ສີດາຈະຕາກ
ແດດຕາກຝົນ
15 ນີ້ເປັນເມືອງທີ່ສນຸກສນານທີ່ຢູ່ຢ່າງປອດພັຍ ເປັນເມືອງທີ່ຄິດໃນໃຈຂອງຕົນວ່າ, “ຂ້ອຍນີ້ແຫລະ ແລະບໍ່ມີ
ເມືອງອື່ນໃດອີກ” ມັນເປັນເມືອງຮ້າງເສັຽແລ້ວ ເປັນທີ່ອາສັຍນອນຂອງສັດປ່າ ທຸກຄົນທີ່ຜ່ານເມືອງນີ້ໄປຈະ
ເບະປາກແລະສັ່ນກຳປັ້ນຂອງເຂົາ

## 3 ບາບຂອງເຢຣູຊາເລັມແລະການໄຖ່

The Wickedness of Jerusalem

1 ວິບັດແກ່ເມືອງນີ້ທີ່ເປັນເມືອງກະບົດ ແລະເປັນມົນທິນ ເປັນເມືອງທີ່ບີບບັງຄັບເຂົາ
2 ເມືອງນີ້ບໍ່ຍອມຟັງສຽງໃດໆ ແລະບໍ່ຍອມຮັບການຕີສອນໃດໆ ເມືອງນີ້ບໍ່ວາງໃຈໃນພຣະຜູ້ເປັນເຈົ້າ ແລະບໍ່
ຍອມເຂົ້າມາໃກ້ພຣະເຈົ້າ
3 ເຈົ້ານາຍທີ່ຢູ່ໃນເມືອງນີ້ກໍເຫມືອນສິງທີ່ຄຳຣາມ ຜູ້ພິພາກສາຂອງເມືອງກໍເຫມືອນຫມາປ່າຍາມຄ່ຳ ຊຶ່ງບໍ່ຍອມ
ຖິ້ມສິ່ງໃດໄວ້ຈົນຮຸ່ງເຊົ້າ
4 ຜູ້ປະກາດພຣະທັມຂອງເມືອງນີ້ເປັນຄົນພານ ເປັນຄົນທໍຣະຍົດ ບັນດາປະໂຣຫິດຂອງເມືອງນີ້ກໍກະທຳສິ່ງສັກ
ສິດໃຫ້ເປັນມົນທິນ ເຂົາຝ່າຝືນຕໍ່ທັມບັນຍັດ
5 ພຣະຜູ້ເປັນເຈົ້າຊົງດຳຣົງຢູ່ໃນເມືອງນັ້ນຊອບທັມ ພຣະອົງບໍ່ໄດ້ຊົງກະທຳຜິດເລີຍ ທຸກເຊົ້າພຣະອົງສຳແດງ
ຄວາມຍຸດຕິທັມຂອງພຣະອົງ ທຸກຕອນເຊົ້າບໍ່ໄດ້ຂາດເລີຍ ແຕ່ຄົນອະຍຸດຕິທັມບໍ່ຮູ້ຈັກອາຍ
6 “ເຮົາໄດ້ກຳຈັດປະຊາຊາດທັງຫລາຍເສັຽ ກຳແພງເມືອງຂອງເຂົາພັງທະລາຍ ເຮົາກະທຳໃຫ້ຖນົນໃນເມືອງນັ້ນ
ຮ້າງເປົ່າ ບໍ່ມີຜູ້ໃດຍ່າງໃນນັ້ນ ຫົວເມືອງຂອງເຂົາເປັນເມືອງຮ້າງບໍ່ມີຄົນ ບໍ່ມີຊາວເມືອງເຫລືອ
7 ເຮົາກ່າວວ່າ “ແທ້ຈິງ ເມືອງນັ້ນຄົງຈະຢຳເກງເຮົາ ເມືອງຈະຍອມຮັບການຕີສອນ ເມືອງຄົງຈະບໍ່ຖິ້ມສາຍຕາໄປ
ເສັຽຈາກບັນດາສິ່ງຕ່າງໆທີ່ເຮົາກຳຊັບໄວ້” ແຕ່ເຂົາທັງຫລາຍຍິ່ງກັບຮ້ອນໃຈທີ່ຈະໃຫ້ການກະທຳຂອງເຂົາ
ເສື່ອມຊາມ”

Punishment and Conversion of the Nations

(ປຖກ 11:1-9; ກຈກ 2:1-11)

8 ພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ, “ເຫດສັນນັ້ນຈົ່ງຄອຍເຮົາ ຄອຍວັນທີ່ເຮົາລຸກຂຶ້ນເປັນພຍານເພາະການຕົກລົງໃຈ
ຂອງເຮົາກໍຄືຈະຮວມປະຊາຊາດໃຫ້ຣາຊອານາຈັກຊຸມນຸມກັນ ເພື່ອເທຄວາມພິໂຣດຂອງເຮົາເທິງເຂົາທັງ

ຫລາຍ ຄືຄວາມຮ້ອນແຮງແຫ່ງຄວາມພິໂຣດຂອງເຮົາ ເພາະວ່າພິພົບທັງສິ້ນຖືກເຜົາຜານໃນໄຟແຫ່ງຄວາມ
ຫວງແຫນຂອງເຮົາ
9 ໃນເວລານັ້ນ ເຮົາຈະປ່ຽນຮີມຝີປາກຂອງຊົນຊາດທັງຫລາຍໃຫ້ເປັນຮີມຝີປາກບໍຣິສຸດ ເພື່ອວ່າທຸກຄົນຈະຮ້ອງ
ທູນອອກ  ພຣະນາມພຣະຜູ້ເປັນເຈົ້າ ແລະບົວລະບັດພຣະອົງເປັນໃຈດຽວກັນ
10 ບຸກຄົນທີ່ທູນຂໍຕໍ່ເຮົາ ຄືຄົນຂອງເຮົາທີ່ຖືກກຳຈັດພັດພາກໄປ ຈະນຳເອົາເຄື່ອງບູຊາຂອງເຮົາມາຈາກຟາກຂ້າງ
ນັ້ນຂອງແມ່ນ້ຳແຫ່ງເອທີໂອເປັຽ
11 “ໃນວັນນັ້ນ ເຈົ້າຈະບໍ່ຖືກກະທຳໃຫ້ອັບອາຍ ດ້ວນການກະທຳຊຶ່ງເຈົ້າໄດ້ກະບົດຕໍ່ເຮົາ ເພາະໃນເວລານັ້ນເຮົາ
ຈະຄັດຜູ້ໂອ້ອວດຈອງຫອງນັ້ນອອກເສັຽຈາກຖ້າມກາງເຈົ້າ ເຈົ້າຈຶ່ງຈະບໍ່ເຍີ່ຍິ່ງຈອງຫອງໃນພູເຂົາບໍຣິສຸດຂອງ
ເຮົາອີກຕໍ່ໄປ
12 ເພາະເຮົາຈະເຫລືອແຕ່ຄົນທີ່ຖ່ອມໃຈແລະຈຽມຕົວໄວ້ໃນຖ້າມກາງເຈົ້າ ເຂົາຈະສແວງຫາທີ່ລີ້ພັຍໃນພຣະນາມ
ແຫ່ງພຣະຜູ້ເປັນເຈົ້າ
13 ບັນດາຄົນທີ່ເຫລືອຢູ່ໃນອິສຣາເອນ ເຂົາຈະບໍ່ກະທຳຄວາມຜິດແລະບໍ່ກ່າວຄຳມຸສາ ແລະໃນປາກຂອງເຂົານັ້ນ
ຈະຫາລີ້ນທີ່ລໍ້ລວງກໍບໍ່ມີ ເພາະເຂົາທັງຫລາຍຈະທ່ຽວຫາກິນແລະນອນລົງ ແລະບໍ່ມີຜູ້ໃດກະທຳໃຫ້ເຂົາກົວ
ເກງ”

A song of Joy

14 “ໂອ ບຸດຕຣີແຫ່ງຊີໂອນເອີຍ, ຈົ່ງຮ້ອງເພງສຽງດັງ ໂອ ອິສຣາເອນເອີຍ ຈົ່ງໂຮ່ຮ້ອງເຖີດ ຈົ່ງຊົມຊື່ນຍິນດີແລະ
ຊົມຊື່ນດ້ວຍເຕັມໃຈຂອງເຈົ້າ ໂອ ບຸດຕຣີແຫ່ງເຢຣູຊາເລັມ
15 ພຣະຜູ້ເປັນເຈົ້າຊົງລົ້ມເລີກການພິພາກສາລົງໂທດເຈົ້າແລ້ວ ພຣະອົງຊົງຂັບໄລ່ສັດຕຣູຂອງເຈົ້າອອກໄປແລ້ວ
ກະສັດແຫ່ງອິສຣາເອນຄືພຣະຜູ້ເປັນເຈົ້າຊົງຢູ່ຖ້າມກາງເຈົ້າ ເຈົ້າຈະບໍ່ຢ້ານພັຍວິບັດອີກຕໍ່ໄປ
16 ໃນວັນນັ້ນ ເຂົາຈະເວົ້າກັບເຢຣູຊາເລັມວ່າ “ໂອ ຊີໂອນເອີຍ, ຢ່າຢ້ານເລີຍ ຢ່າໃຫ້ມືຂອງເຈົ້າອ່ອນເພັຽໄປ
17 ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າຢູ່ຖ້າມກາງເຈົ້າ ເປັນນັກຣົບຜູ້ປະທານຄວາມມີຊັຍ ພຣະອົງຊົງຊົມຊື່ນເພາະ
ເຈົ້າດ້ວຍຄວາມຍິນດີ ພຣະອົງຈະຊົງຮື້ຟື້ນເຈົ້າໃຫມ່ດ້ວຍຄວາມຮັກຂອງພຣະອົງ ພຣະອົງຈະຊົງຊົມຊື່ນເພາະ
ເຈົ້າດ້ວຍຮ້ອງເພງສຽງດັງ
18 ດັ່ງໃນວັນທີ່ມີການລ້ຽງ ເຮົາຈະທຳໃຫ້ພັຍວິບັດອອກເສັຽຈາກເຈົ້າ ເພື່ອເຈົ້າຈະບໍ່ຕ້ອງທົນຕໍ່ການເຍາະເຍີ້ຍ
ເພາະເຣື່ອງນີ້
19 ເບິ່ງແມ, ໃນເວລານັ້ນເຮົາຈະເຮັດໂທດຜູ້ທີ່ບີບບັງຄັບເຈົ້າທຸກຄົນ ເຮົາຈະຊ່ອຍຄົນຂາພິການແລະຮວບຮວມ
ຄົນທີ່ກະຈັດກະຈາຍໄປ ແລະເຮົາຈະປ່ຽນຄວາມອັບອາຍຂອງເຂົາໃຫ້ເປັນຄວາມຫນ້າສັຣເສີນ ແລະໃຫ້ເປັນ
ສຽງລືໄປໃນໂລກ
20 ໃນເວລານັ້ນ ເຮົາຈະນຳເຈົ້າກັບເຂົ້າມາ ຄືໃນເວລາທີ່ເຮົາຮວບຮວມພວກເຈົ້າເຂົ້າດ້ວຍກັນ ເຮົາຈະກະທຳໃຫ້
ເຈົ້າມີຊື່ສຽງ ແລະເປັນທີ່ສັຣເສີນ ໃນຖ້າມກາງບັນດາຊົນຊາດທັງຫລາຍໃນໂລກ ຄືເມື່ອເຮົາໃຫ້ເຈົ້າກັບສູ່ສະ
ພາບເດີມຕໍ່ຫນ້າຕໍ່
ຕາເຈົ້າ” ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ